ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ລັດຖະບານ**

ເລກທີ 297 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 22.09.2011

# ດຳລັດ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສະຖາບັນວິທະຍາສາດສັງຄົມແຫ່ງຊາດ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສ.ປ.ປ. ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003 ໝວດທີ IV ມາດຕາ 12 ວ່າດ້ວຍສິດ ແລະ ໜ້າທີ່ ຂອງ ນາຍົກລັດຖະມົນຕີ;
- ອີງຕາມ ມະຕິຕົກລົງ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 60/ຄລສພ, ລົງວັນທີ 05 ກໍລະກົດ 2011, ວ່າດ້ວຍການສ້າງຕັ້ງສະຖາບັນວິທະຍາສາດສັງຄົມແຫ່ງຊາດ;
- ອີງຕາມ ໜັງສືສະເໜີ ຂອງຫົວໜ້າສະຖາບັນວິທະຍາສາດສັງຄົມແຫ່ງຊາດ ສະບັບເລກທີ 174/ສວສຊ, ລົງວັນທີ 08 ກໍລະກົດ 2011;
- ອີງຕາມ ໜັງສືສະເໜີ ຂອງທ່ານລັດຖະມົນຕີວ່າການ ກະຊວງພາຍໃນ ສະບັບເລກທີ 40/ພນ, ລົງວັນທີ 09 ກັນຍາ 2011.

### ນາຍົກລັດຖະມົນຕີແຫ່ງ ສ.ປ.ປ. ລາວ ອອກດຳລັດ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ຂອງສະຖາບັນວິທະຍາສາດສັງຄົມແຫ່ງຊາດ ເພື່ອເປັນບ່ອນອີງໃນການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະຖາບັນ ແນໃສ່ຈັດຕັ້ງປະຕິບັດແນວທາງນະໂຍບາຍ ຂອງພັກ ແລະລັດຖະບານ ກ່ຽວກັບການພັດທະນາວິທະຍາສາດສັງຄົມ ຂອງປະເທດເຮົາ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ສະຖາບັນວິທະຍາສາດສັງຄົມແຫ່ງຊາດ ຂຽນຫຍໍ້ດ້ວຍຕົວອັກສອນພາສາລາວວ່າ: ສ.ວ.ສ.ຊ ແມ່ນອົງການຈັດຕັ້ງວິຊາການ ທີ່ຂຶ້ນກັບການຊີ້ນຳ ຂອງລັດຖະບານ, ມີຖານະເທົ່າກັບກະຊວງ.

ສ.ວ.ສ.ຊ ມີພາລະບົດບາດຄົ້ນຄວ້າທິດສະດີການເມືອງ, ຄົ້ນຄວ້າວິທະຍາສາດສັງຄົມ, ສະຫຼຸບພຶດຕິກຳ ແລະ ປະກອບສ່ວນເປັນເສນາທິການຊ່ວຍສູນກາງພັກ, ລັດຖະບານ ໃນການຄົ້ນຄວ້ານະໂຍບາຍຕ່າງໆ ຕາມການມອບໝາຍ; ຕອບສະໜອງຂໍ້ມູນຂ່າວສານ ແລະ ໃຫ້ຄຳປຶກສາດ້ານທິດສະດີ, ວິທະຍາສາດສັງຄົມ ເພື່ອຮັບໃຊ້ການວາງແນວທາງນະໂຍບາຍ, ການວາງແຜນຍຸດທະສາດແຜນແມ່ບົດ ແລະ ແຜນການພັດທະນາປະເທດໃນແຕ່ລະໄລຍະ; ລົມທົບການຄົ້ນຄວ້າວິທະຍາສາດກັບການບຳລຸງສ້າງກຸ້ມແຖວນັກຄົ້ນຄວ້າ, ນັກວິທະຍາສາດສັງຄົມໃຫ້ມີຄວາມສາມາດພຽງພໍ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ ໃນແຕ່ລະໄລຍະ; ຈັດຕັ້ງເຜີຍແຜ່ຜົນສຳເລັດ ຂອງການຄົ້ນຄວ້າດ້ວຍຮູບການຕ່າງໆ ທີ່ເໝາະສົມ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່**

3.1. ສ້າງ ແລະ ນຳສະເໜີລັດຖະບານພິຈາລະນາແຜນຍຸດທະສາດ, ແຜນແມ່ບົດ, ແຜນການ 05 ປີ, ແຜນການປະຈຳປີ ຂອງ ສ.ວ.ສ.ຊ ແລະ ຈັດຕັ້ງປະຕິບັດແຜນການຕ່າງໆ ທີ່ກ່າວມານັ້ນໃຫ້ສຳເລັດຜົນ ພາຍຫລັງທີ່ຖືກຮັບຮອງຈາກລັດຖະບານ;

3.2. ສ້າງແຜນງານ ແລະ ໂຄງການຄົ້ນຄວ້າຕ່າງໆ ໃນຂົງເຂດທິດສະດີການເມືອງ ແລະ ວິທະຍາສາດສັງຄົມ ເພື່ອຮັບໃຊ້ການພັດທະນາປະເທດຊາດໃນແຕ່ລະໄລຍະ; ພ້ອມທັງເປັນເຈົ້າການປະສານລົມທົບກັບກະຊວງ, ອົງການ, ສະຖາບັນຄົ້ນຄວ້າທີ່ກ່ຽວຂ້ອງຕ່າງໆ ເພື່ອຈັດຕັ້ງປະຕິບັດແຜນງານ ແລະ ໂຄງການຄົ້ນຄວ້າທີ່ວາງອອກໃຫ້ສຳເລັດຜົນ;

3.3. ຕິດຕາມເກັບກຳຂໍ້ມູນ-ຂ່າວສານກ່ຽວກັບໝາກຜົນຂອງການຄົ້ນຄວ້າດ້ານທິດສະດີ, ວິທະຍາສາດສັງຄົມທີ່ເປັນອັນໃໝ່ ທັງຢູ່ພາຍໃນ ແລະ ຕ່າງປະເທດ; ຕິດຕາມ, ຄົ້ນຄວ້າ ແລະ ກຳສະພາບການພັດທະນາເສດຖະກິດ-ສັງຄົມ ຂອງປະເທດໃນແຕ່ລະໄລຍະ ເພື່ອສະໜອງຂໍ້ມູນ-ຂ່າວສານໃຫ້ສູນກາງພັກ ແລະລັດຖະບານຢ່າງທັນເວລາ; ພ້ອມທັງໃຫ້ຄຳປຶກສາດ້ານທິດສະດີ, ວິທະຍາສາດສັງຄົມແກ່ສູນກາງພັກ, ລັດຖະບານ, ຂະແໜງການ ແລະ ທ້ອງຖິ່ນຕາມຄວາມສາມາດຕົວຈິງ ເພື່ອຮັບໃຊ້ການກຳນົດແນວທາງ, ນະໂຍບາຍ, ແຜນຍຸດທະສາດ, ແຜນແມ່ບົດຂອງການພັດທະນາປະເທດໃນແຕ່ລະໄລຍະ;

3.4. ຄົ້ນຄວ້າ ແລະ ໃຫ້ຄຳອະທິບາຍ ບົນພື້ນຖານທິດສະດີ, ວິທະຍາສາດສັງຄົມ ຕໍ່ກັບບັນຫາຕ່າງໆ ທີ່ຕັ້ງຂຶ້ນ ບົນເສັ້ນທາງແຫ່ງການພັດທະນາເສດຖະກິດ-ສັງຄົມ ຂອງປະເທດ ພື່ອໃຫ້ສັງຄົມຮັບຮູ້ເຂົ້າໃຈຢ່າງຖືກຕ້ອງຕາມຫຼັກວິທະຍາສາດ ແລະ ຄວາມເປັນຈິງ;

3.5. ເປັນເຈົ້າການປະກອບສ່ວນຮ່ວມກັບພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ຄົ້ນຄວ້າຮ່າງນະໂຍບາຍ, ກົດໝາຍ, ກົນໄກ, ລະບອບລະບຽບການໃນການພັດທະນາວຽກງານທິດສະດີ, ວິທະຍາສາດສັງຄົມ ຂອງປະເທດເຮົາ ແລະ ນຳສະເໜີລັດຖະບານປະກາດໃຊ້ນະໂຍບາຍ, ກົດໝາຍ, ກົນໄກ, ລະບອບລະບຽບການຕ່າງໆ ທີ່ສອດຄ່ອງກັບສະພາບຕົວຈິງ ຂອງແຕ່ລະໄລຍະເພື່ອຊຸກຍູ້ສົ່ງເສີມ ແລະ ພັດທະນາວຽກງານທິດສະດີ, ວິທະຍາສາດສັງຄົມ ຂອງປະເທດເຮົາໃຫ້ຂະຫຍາຍຕົວທຽມທັນກັບຄວາມຮຽກຮ້ອງຕ້ອງການ ຂອງການພັດທະນາປະເທດຊາດ;

3.6. ຈັດຕັ້ງເຜີຍແຜ່ຄວາມຮູ້ດ້ານທິດສະດີ, ວິທະຍາສາດສັງຄົມ ແລະເຜີຍແຜ່ໝາກຜົນ ຂອງການຄົ້ນຄວ້າ ດ້ານທິດສະດີ, ວິທະຍາສາດສັງຄົມ ດ້ວຍຮູບການ ຕ່າງໆ ທີ່ເໝາະສົມ, ເຮັດໃຫ້ພົນລະເມືອງລາວມີຄວາມຮູ້ດ້ານທິດສະດີ, ວິທະຍາສາດສັງຄົມ ນັບມື້ນັບສູງຂຶ້ນ;

3.7. ສົມທົບການຄົ້ນຄວ້າທິດສະດີ, ວິທະຍາສາດ ກັບການບຳລຸງສ້າງຖັນແຖວນັກຄົ້ນຄວ້າ, ນັກວິທະຍາສາດສັງຄົມ ດ້ວຍຮູບການຕ່າງໆທີ່ສອດຄ່ອງເໝາະສົມ, ເຮັດໃຫ້ຖັນແຖວນັກຄົ້ນຄວ້າ, ນັກວິທະຍາສາດສັງຄົມ ຂອງປະເທດເຮົາມີຄວາມສາມາດສູງຂຶ້ນ ແລະ ມີຈຳນວນພຽງພໍກັບຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ການເມືອງໃນແຕ່ລະໄລຍະ;

3.8. ພົວພັນກັບອົງການຈັດຕັ້ງຄົ້ນຄວ້າທິດສະດີ, ວິທະຍາສາດສັງຄົມ ຂອງບັນດາປະເທດເພື່ອນມິດ, ບັນດາອົງການຈັດຕັ້ງສາກົນ ແລະ ປະເທດຕ່າງໆ ເພື່ອແລກປ່ຽນບົດຮຽນ ແລະ ຮ່ວມມືຄົ້ນຄວ້າດ້ານທິດສະດີ, ວິທະຍາສາດສັງຄົມ ດ້ວຍຮູບການທີ່ເໝາະສົມ; ພ້ອມກັນນັ້ນກໍ່ຍາດແຍ່ງການຊ່ວຍເຫຼືອດ້ານທຶນຮອນ, ເຕັກນິກວິຊາການ, ດ້ານການສ້າງພະນັກງານ, ສ້າງນັກວິທະຍາສາດ ປະກອບສ່ວນເຂົ້າໃນການພັດທະນາວຽກງານທິດສະດີ ແລະ ວິທະຍາສາດສັງຄົມ ຂອງປະເທດເຮົາໃຫ້ນັບມື້ນັບຂະຫຍາຍຕົວ;

3.9. ຄຸ້ມຄອງກົງຈັກການຈັດຕັ້ງ, ຖັນແຖວພະນັກງານ-ລັດຖະກອນ ແລະ ນັກວິທະຍາສາດ ຂອງ ສ.ວ.ສ.ຊ ຕາມລະບຽບການ ແລະ ຕາມການແບ່ງຂັ້ນຄຸ້ມຄອງ; ຄຸ້ມຄອງ ແລະ ນຳໃຊ້ຊັບສົມບັດຂອງລັດ ແລະ ງົບປະມານການເງິນ ຂອງ ສ.ວ.ສ.ຊ ຢ່າງມີປະສິດທິຜົນ;

3.10. ປະຕິບັດໜ້າທີ່ອື່ນໆ ທີ່ກົມການເມືອງ, ຄະນະເລຂາທິການສູນກາງພັກ, ລັດຖະບານ ແລະ ນາຍົກລັດຖະມົນຕີ ມອບໝາຍໃຫ້.

**ມາດຕາ 4. ຂອບເຂດສິດ**

4.1. ສະເໜີໄປຍັງບັນດາກະຊວງ, ອົງການທຽບເທົ່າກະຊວງ ຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ແລະ ຫົວໜ່ວຍການຜະລິດ, ທຸລະກິດ ສະໜອງຂໍ້ມູນຂ່າວສານ ທີ່ຈຳເປັນເພື່ອຮັບໃຊ້ການຄົ້ນຄວ້າທິດສະດີ, ວິທະຍາສາດສັງຄົມ;

4.2. ສະເໜີສູນກາງພັກ ແລະ ລັດຖະບານ ຈັດຕັ້ງສະພາວິທະຍາສາດຂັ້ນລັດ; ພ້ອມດຽວກັນນັ້ນ ສ.ວ.ສ.ຊ ເອງ ມີສິດຈັດຕັ້ງສະພາວິທະຍາສາດຂັ້ນ ສ.ວ.ສ.ຊ ເພື່ອພິຈາລະນາບັນຫາຕ່າງໆທີ່ກ່ຽວຂ້ອງກັບການຄົ້ນຄວ້າວິທະຍາສາດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

4.3. ໃຫ້ຄຳປຶກສາ, ຄຳສະເໜີແນະ ຕໍ່ສູນກາງພັກ, ລັດຖະບານ, ນາຍົກລັດຖະມົນຕີ, ຫົວໜ້າອົງການຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ແລະ ຫົວໜ່ວຍການຜະລິດ, ທຸລະກິດ ໃນດ້ານທິດສະດີ, ວິທະຍາສາດສັງຄົມ;

4.4. ເຊັນສັນຍາດ້ານການຄົ້ນຄວ້າທິດສະດີ, ວິທະຍາສາດສັງຄົມກັບ ອົງການຈັດຕັ້ງຂອງພັກ, ລັດ, ອົງການຈັດຕັ້ງສັງຄົມ ຫຼື ຫົວໜ່ວຍການຜະລິດ, ທຸລະກິດ ຂັ້ນຕ່າງໆເພື່ອຄົ້ນຄວ້າຫົວຂໍ້ໃດໜຶ່ງ ຫຼື ບັນຫາໃດໜຶ່ງທີ່ລະອຽດ ຕາມການສະເໜີຂອງອົງການທີ່ກ່ຽວຂ້ອງ ແລະ ຕາມຄວາມສາມາດຕົວຈິງ ຂອງ ສ.ວ.ສ.ຊ;

4.5. ເຊັນສັນຍາ, ອະນຸສັນຍາ, ບົດບັນທຶກຊ່ວຍຈຳ ກັບອົງການຈັດຕັ້ງສາກົນ ແລະ ສະຖາບັນຄົ້ນຄວ້າວິທະຍາສາດ ຂອງຕ່າງປະເທດ ຕາມການມອບໝາຍສິດ ຫຼື ຕາມການເຫັນດີ ຂອງກົມການເມືອງ, ຄະນະເລຂາທິການສູນກາງພັກ, ລັດຖະບານ ຫຼື ນາຍົກລັດຖະມົນຕີ;

4.6. ເຂົ້າຮ່ວມກອງປະຊຸມຕ່າງໆ ທີ່ອົງການຈັດຕັ້ງພາຍໃນ ຫຼື ຕ່າງປະເທດຈັດຂຶ້ນ ກ່ຽວກັບວຽກງານທິດສະດີ, ວິທະຍາສາດສັງຄົມ ຕາມການເຊີນ ແລະ ຕາມການອະນຸມັດ;

4.7. ເຂົ້າຮ່ວມໂຄງການພັດທະນາ ດ້ານເສດຖະກິດ-ສັງຄົມ ຕ່າງໆ ຂອງລັດຖະບານ, ຂອງທ້ອງຖິ່ນ, ກໍ່ຄືຂອງຕ່າງປະເທດ ຕາມຄວາມຮຽກຮ້ອງຕ້ອງການ ແລະ ຄວາມສາມາດຕົວຈິງ;

4.8. ອອກຂໍ້ຕົກລົງ, ກົດລະບຽບ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບບັນຫາຕ່າງໆ ທີ່ຢູ່ໃນຄວາມຮັບຜິດຊອບ ຂອງ ສ.ວ.ສ.ຊ;

4.9. ແຕ່ງຕັ້ງ, ຍົກຍ້າຍ, ປະຕິບັດນະໂຍບາຍ, ປະຕິບັດວິໄນ ແລະ ອື່ນໆ ຕໍ່ພະນັກງານ-ລັດຖະກອນ ແລະ ນັກຄົ້ນຄວ້າວິທະຍາສາດສັງຄົມ ທີ່ຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຂອງຕົນຕາມລະບຽບການກຳນົດ;

4.10. ປະຕິບັດສິດອື່ນໆ ທີ່ລັດຖະບານ, ນາຍົກລັດຖະມົນຕີ ມອບໝາຍໃຫ້.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 5. ໂຄງປະກອບກົງຈັກ**

ກົງຈັກການຈັດຕັ້ງ ຂອງ ສ.ວ.ສ.ຊ ທີ່ມີຖານະເທົ່າກັບກົມ ປະກອບດ້ວຍ:

1. ສະຖາບັນຄົ້ນຄວ້າ ການເມືອງວິທະຍາ;
2. ສະຖາບັນຄົ້ນຄວ້າ ປະຫວັດສາດ;
3. ສະຖາບັນຄົ້ນຄວ້າ ສັງຄົມສາດ;
4. ສະຖາບັນຄົ້ນຄວ້າ ວັດທະນະທຳ;
5. ສະຖາບັນຄົ້ນຄວ້າ ເສດຖະກິດ;
6. ສະຖາບັນຂໍ້ມູນຂ່າວສານ ແລະ ວາລະສານວິທະຍາສາດສັງຄົມ;
7. ຫ້ອງການ; (ບໍລິຫານ, ຄົ້ນຄວ້າສັງລວມ, ຈັດຕັ້ງພະນັກງານ, ແຜນການ-ການເງິນ ແລະ ຮ່ວມມືສາກົນ);

8. ຫ້ອງການຄຸ້ມຄອງວິທະຍາສາດ;
9. ຫ້ອງການຄົ້ນຄວ້ານະໂຍບາຍ.

**ມາດຕາ 6. ໂຄງປະກອບບຸກຄະລາກອນ**

ຄະນະນໍາ ສ.ວ.ສ.ຊ ປະກອບມີ: ປະທານ ແລະ ບັນດາຮອງປະທານ; ມີບັນດາຫົວໜ້າ, ຮອງຫົວໜ້າສະຖາບັນຄົ້ນຄວ້າວິທະຍາສາດ; ຫົວໜ້າ ແລະ ຮອງຫົວໜ້າຫ້ອງການ; ບັນດາຫົວໜ້າຂະແໜງວິຊາ; ຫົວໜ້າພະແນກ, ຮອງຫົວໜ້າພະແນກ, ຖັນແຖວນັກວິທະຍາສາດ ແລະ ພະນັກງານລັດຖະກອນ ສັງກັດພາຍໃນ ສ.ວ.ສ.ຊ.

- ປະທານ ສ.ວ.ສ.ຊ ໄດ້ຮັບການແຕ່ງຕັ້ງ ຫຼື ຮັບຮອງຕາມກົດໝາຍກໍານົດ; ມີໜ້າທີ່ຈັດຕັ້ງປະຕິບັດແນວທາງນະໂຍບາຍວາງອອກ, ເປັນຜູ້ອໍານວຍ, ຄວບຄຸມວຽກງານຮອບດ້ານ ຂອງ ສ.ວ.ສ.ຊ; ມີຄວາມຮັບຜິດຊອບຕໍ່ສູນກາງພັກ ແລະ ລັດຖະບານກ່ຽວກັບຜົນສໍາເລັດ ແລະ ຂໍ້ບົກຜ່ອງໃນການຈັດຕັ້ງປະຕິບັດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງ ສ.ວ.ສ.ຊ ຕາມທີ່ໄດ້ກໍານົດໃນມາດຕາ 2, 3 ແລະ 4 ເທິງນີ້;
- ບັນດາຮອງປະທານ ສ.ວ.ສ.ຊ ເປັນຜູ້ຊ່ວຍປະທານໃນການອໍານວຍ, ຄວບຄຸມວຽກງານ ຂອງ ສ.ວ.ສ.ຊ ແລະ ຖືກມອບໝາຍໃຫ້ຮັບຜິດຊອບຂົງເຂດ ຫຼື ກຸ່ມວຽກງານໃດໜຶ່ງ ຂອງ ສ.ວ.ສ.ຊ; ຮອງປະທານ ມີຄວາມຮັບຜິດຊອບຕໍ່ປະທານ ກ່ຽວກັບຜົນສໍາເລັດ ຫຼື ຂໍ້ບົກຜ່ອງໃນຂົງເຂດວຽກງານທີ່ແບ່ງງານໃຫ້ຮັບຜິດຊອບ. ບັນດາຮອງປະທານ ສ.ວ.ສ.ຊ, ບັນດາຫົວໜ້າ ສະຖາບັນຄົ້ນຄວ້າວິທະຍາສາດ ແລະ ຫົວໜ້າຫ້ອງການ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຕາມກົດໝາຍກໍານົດ; ບັນດາຮອງຫົວໜ້າສະຖາບັນຄົ້ນຄວ້າວິທະຍາສາດ, ຮອງຫົວໜ້າຫ້ອງການ ລົງມາຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍປະທານ ສ.ວ.ສ ຊ.

## ໝວດທີ IV
## ຫລັກການ ແລະ ລະບອບແບບແຜນວິທີເຮັດວຽກ

**ມາດຕາ 7. ຫຼັກການ**

ສ.ວ.ສ.ຊ ເຄື່ອນໄຫວວຽກງານຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ປະຕິບັດລະບອບຫົວໜ້າດຽວ. ເປີດກວ້າງປະຊາທິປະໄຕ, ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງຖັນແຖວພະນັກງານ, ນັກວິທະຍາສາດ ໃນການຄົ້ນຄວ້າວິທະຍາສາດ ກໍ່ຄືການພັດທະນາ ສ.ວ.ສ.ຊ.

**ມາດຕາ 8. ແບບແຜນວິທີເຮັດວຽກ**

8.1. ເຮັດວຽກໂດຍມີແຜນການ, ແຜນງານ ແລະ ໂຄງການທີ່ລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີຄາດໝາຍ ໃນແຕ່ລະໄລຍະ;

8.2. ການເຄື່ອນໄຫວ ຂອງ ສ.ວ.ສ.ຊ ຖືເອົາແນວທາງຍຸດທະສາດ, ແຜນນະໂຍບາຍ ຂອງສູນກາງພັກ ແລະ ລັດຖະບານ ກ່ຽວກັບວຽກວິທະຍາສາດສັງຄົມ;

8.3. ປະຕິບັດລະບອບຕິດຕາມ, ກວດກາ, ສ່ອງແສງລາຍງານ ແລະ ສະຫຼຸບຖອດຖອນບົດຮຽນໃນແຕ່ລະດ້ານ ແລະ ແຕ່ລະໄລຍະ; ພົວພັນປະສານສົມທົບເປັນຢ່າງດີກັບອົງການຈັດຕັ້ງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ, ກັບອົງການຈັດຕັ້ງສາກົນ ແລະ ຕ່າງປະເທດ;

8.4. ປະຕິບັດລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ ຫຼື ປະຈຳປີ ແລະ ປະຕິບັດລະບອບລາຍງານໃຫ້ຂັ້ນເທິງຢ່າງເປັນປົກກະຕິ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 9. ກາປະທັບ ແລະ ງົບປະມານ**

ສ.ວ.ສ.ຊ ມີກາປະທັບ, ມີງົບປະມານຂັ້ນ 01 ເພື່ອຮັບໃຊ້ວຽກງານທາງລັດຖະການ ແລະ ມີລາຍໄດ້ຈາກການບໍລິການດ້ານການຄົ້ນຄວ້າວິທະຍາສາດສັງຄົມ.

**ມາດຕາ 10. ການຜັນຂະຫຍາຍ**

ມອບໃຫ້ປະທານ ສ.ວ.ສ.ຊ ກຳນົດພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ໂຄງປະກອບການຈັດຕັ້ງ ຂອງບັນດາສະຖາບັນຄົ້ນຄວ້າ ແລະ ຫ້ອງການຊ່ວຍວຽກ ຂອງສະຖາບັນ; ພ້ອມທັງກຳນົດລະອຽດກ່ຽວກັບລະບຽບການເຄື່ອນໄຫວວຽກງານ ແລະ ການພົວພັນປະສານງານພາຍໃນ ສ.ວ.ສ.ຊ ໃຫ້ສອດຄ່ອງ, ຮັບປະກັນລັກສະນະວິທະຍາສາດ.

**ມາດຕາ 11. ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ສ.ວ.ສ.ຊ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 12. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ດຳລັດສະບັບນີ້ປ່ຽນແທນດຳລັດ ສະບັບເລກທີ 137/ນຍ, ລົງວັນທີ 24 ກໍລະກົດ 2006.

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ